ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ພິທີປະຖະກະຖາວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 67 ປີ



ໃນວັນທີ 07 ມີນາ 2023 ທີ່ຫ້ອງປະຊຸມຊັ້ນ VII ທະນາຄານແຫ່ງ ສປປ ລາວ (ທຫລ) ສະຫະພັນກຳມະບານລາວ ທຫລ ໄດ້ຈັດພິທີປະຖະກະຖາວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 67 ປີ ໂດຍການເປັນປະທານຂອງ ສະຫາຍ ສຸກັນ ຈັນທະວົງ ຮອງປະທານສະຫະພັນກຳມະບານ ທຫລ ພ້ອມນີ້, ກໍ່ມີຕາງໜ້າຈາກສະຫະພັນແມ່ຍິງຮາກຖານ ທຫລ, ຕາງໜ້າຄະນະບໍລິຫານງານຊາວໜຸ່ມຮາກຖານ ທຫລ ແລະ ຄະນະໜ່ວຍກຳມະບານ ພ້ອມດ້ວຍສະມາຊິກກຳມະບານທຸກສະຫາຍຈາກບັນດາກົມ-ທຽບເທົ່າກົມ ເຂົ້າຮ່ວມຢ່າງພ້ອມພຽງ.

ການຈັດຕັ້ງທີພິປະຖະກະຖາຄັ້ງນີ້ ໄດ້ເປີດຂຶ້ນໃນຊ່ວງເວລາທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ ພວມຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ມະຕິກອງປະຊຸມໃຫຍ່ ຄັ້ງທີ IV ຂອງອົງຄະນະພັກ ທະນາຄານແຫ່ງ ສປປ ລາວ ແລະ ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນກຳມະບານລາວທົ່ວປະເທດ ຄັ້ງທີ VIII. ໃນພິທີປະຖະກະຖາດັ່ງກ່າວໄດ້ມີການເຜີຍແຜ່ເຊື່ອມຊຶມເອກະສານສຳຄັນທີ່ກ່ຽວຂ້ອງ ຂອງສູນກາງສະຫະພັນກຳມະບານລາວ ຄື: ເອກະສານມູນເຊື້ອ ການເຕີບໃຫຍ່ຂະຫຍາຍຕົວຂອງອົງການຈັດຕັ້ງກຳມະບານລາວ ຄົບຮອບ 67 ປີ

(1/2/1956-1/2/2023) ເພື່ອແນໃສ່ໃຫ້ສະມາຊິກກຳມະບານລາວ ໃນຂະແໜງການທະນາຄານ ໄດ້ຮັບຮູ້ ແລະ ເຂົ້າໃຈ, ກຳແໜ້ນເອກະສານກ່ຽວຂ້ອງເພື່ອນຳໄປເຜີຍແຜ່ໃຫ້ຖັນແຖວສະມາຊິກກຳມະບານຂອງຕົນ ໄດ້ຮັບຮູ້-ເຊື່ອມຊຶມຢ່າງເລິກເຊິ່ງ-ທົ່ວເຖິງ ໂດຍສະເພາະຜັນຂະຫຍາຍເປັນແຜນງານ-ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງໃນທຸກດ້ານ ຄຽງຄູ່ກັບການທົບທວນຕີລາຄາຄືນບັນຫາດ້ານອ່ອນ-ຂໍ້ຄົງຄ້າງ ເພື່ອສືບຕໍ່ປັບປຸງແກ້ໄຂໃຫ້ມີການຫັນປ່ຽນທີ່ດີຂຶ້ນ ດ້ວຍຈິດໃຈບຸກທະລຸ. ພ້ອມນີ້, ໃຫ້ສືບຕໍ່ອອກແຮງນຳພາສ້າງຂະບວນການຕ່າງໆ ໃຫ້ມີບັນຍາກາດທີ່ຟົດຟື້ນ ແລະ ຕໍ່ເນື່ອງເປັນຕົ້ນກັບການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ “**5 ເປັນເຈົ້າ**” ຂອງກຳມະບານລາວ ແລະ ຂໍ້ແຂ່ງຂັນ “**ຮັກຊາດ ແລະ ພັດທະນາ**” ຂອງຂະແໜງທະນາຄານ.




ຂ່າວໂດຍ: ນ. ທິດສະບາ ທຳມະວົງສິງ
ພາບໂດຍ: ສົມພົດ ທຳມະວົງ

*ເສດຖະກິດລາວຈະເຂັ້ມແຂງຖ້າປວງຊົນລາວຮ່ວມແຮງນຳໃຊ້ເງິນກີບ*